ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພະລັງງານ ແລະ ບໍ່ແຮ່

ກົມຄຸ້ມຄອງບໍ່ແຮ່

ເລກທີ 4627---/ພບ.ກຄບ6

ນະຄອນຫຼວງວຽງຈັນ, ວັນທີ 30 DEC 2022

# ແຈ້ງການ

ເຖິງ: ທ່ານ ບັນດາທ່ານ ຜູ້ອຳນວຍການ ບໍລິສັດ ລົງທຶນດ້ານບໍ່ແຮ່.

ເລື່ອງ: ການປະກອບເອກະສານກ່ຽວກັບການສະເໜີແຜນການຈຳໜ່າຍ ແລະ ແຜນການນຳເຂົ້າ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ປະຈຳປີ; ການຈຳໜ່າຍ ແລະ ການນຳເຂົ້າແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ແຕ່ລະຄັ້ງ ແລະ ການສະເໜີນຳເຂົ້າແຮ່ທາດ ແລະ ຜະລິດຕະພັນ ແຮ່ທາດ ຜ່ານດົນແດນ ຂອງ ສປປ ລາວ.

- ອີງຕາມ ກົດໝາຍວ່າດ້ວຍແຮ່ທາດ (ສະບັບປັບປຸງ) ສະບັບເລກທີ 31/ສພຊ, ລົງວັນທີ 3/11/2017;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມຄຸ້ມຄອງບໍ່ແຮ່ ສະບັບເລກທີ 0136/ພບ, ລົງວັນທີ 25/1/2022.

ກົມຄຸ້ມຄອງບໍ່ແຮ່, ກະຊວງພະລັງງານ ແລະ ບໍ່ແຮ່ ຂໍແຈ້ງມາຍັງ ທ່ານ ຊາບວ່າ: ເພື່ອອຳນວຍຄວາມສະດວກໃຫ້ແກ່ ວຽກງານການສະເໜີແຜນການຈຳໜ່າຍ ແລະ ແຜນການນຳເຂົ້າ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ປະຈຳປີ; ການ ຈຳໜ່າຍ ແລະ ການນຳເຂົ້າແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ແຕ່ລະຄັ້ງ ແລະ ການສະເໜີນຳເຂົ້າແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ຜ່ານດົນແດນ ຂອງ ສປປ ລາວ, ຊຶ່ງຕ້ອງແມ່ນບໍລິສັດ ທີ່ໄດ້ຮັບອະນຸຍາດຖືກຕ້ອງຕາມກົດໝາຍ, ປະຕິບັດພັນທະທາງດ້ານການເງິນຕໍ່ລັດຖະບານຄົບຖ້ວນ ແລະ ຕ້ອງໄດ້ປະກອບເອກະສານ ດັ່ງນີ້:

**I. ການປະກອບເອກະສານກ່ຽວກັບການສະເໜີແຜນການຈຳໜ່າຍ ແລະ ແຜນການນຳເຂົ້າແຮ່ທາດ ແລະ ຜະລິດຕະພັນ ແຮ່ທາດ ປະຈຳປີ.**

**ກ. ແຜນການຈຳໜ່າຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ປະຈຳປີ (ພາຍໃນ ແລະ ຕ່າງປະເທດ)**

1. ໜັງສືສະເໜີ (ຕາມແບບຟອມ);
2. ສະຫຼຸບການຈຳໜ່າຍຜ່ານມາ (ຕາມແບບຟອມ);
3. ເອກະສານຢັ້ງຢືນການປະຕິບັດພັນທະທາງດ້ານການເງິນ ເຊັ່ນ: ຄ່າຊົດເຊີຍຊັບພະຍາກອນແຮ່ທາດ, ຄ່າສຳປະທານ, ພັນທະ (ທຶນຕາມສັນຍາ), ພາສີ-ອາກອນ ແລະ ຄ່າທຳນຽມອື່ນໆ ທີ່ຜ່ານການຢັ້ງຢືນຈາກຂະແໜງການເງິນ;
4. ຮູບພາບ ແຮ່ທາດ ຫຼື ຜະລິດຕະພັນແຮ່ທາດ;
5. ບົດລາຍງານການຈັດຕັ້ງປະຕິບັດໃນໄລຍະຜ່ານມາ ແລະ ທິດທາງແຜນການໃນຕໍ່ໜ້າ.

**ຂ. ແຜນການນຳເຂົ້າແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ປະຈຳປີ.**

1. ໜັງສືສະເໜີ (ຕາມແບບຟອມ);
2. ສະຫຼຸບການນຳເຂົ້າແຮ່ທາດ ແລະ ຜະລິດຕະພັນແຮ່ທາດຜ່ານມາ (ຕາມແບບຟອມ).
3. ໃບຢັ້ງຢືນຮັບຮອງແຜນການນຳເຂົ້າແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ປະຈຳປີ;
4. ເອກະສານຢັ້ງຢືນການປະຕິບັດພັນທະທາງດ້ານການເງິນ ຈາກການນຳເຂົ້າຄັ້ງຜ່ານມາ ເຊັ່ນ: ກໍລະນີມີຫຼາຍ ປະເພດແຮ່ທາດຕ້ອງໄດ້ແຍກເປັນແຕ່ລະແຮ່ທາດ, ພັນທະ (ທຶນຕາມສັນຍາ), ພາສີ-ອາກອນ ແລະ ຄ່າ ທຳນຽມອື່ນໆ;
5. ສັນຍາ ການຊື້-ຂາຍ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ;

ກົມຄຸ້ມຄອງບໍ່ແຮ່, ກະຊວງພະລັງງານ ແລະ ບໍ່ແຮ່. ຕູ້ໄປສະນີ: 4780; ໂທລະສັບ: (856 21) 415123, 413001; ແຟັກ: (856 21) 413015;
ກະທົ່ງ ໜອງບອນ, ນະຄອນຫຼວງວຽງຈັນ, ສປປ ລາວ. E-mail: dom_reports@yahoo.com

6. ຜົນວິໄຈແຮ່ທາດ (ຈາກຫ້ອງວິໄຈ ທີ່ໄດ້ມາດຕະຖານ);
7. ຮູບພາບ ແຮ່ທາດ ຫຼື ຜະລິດຕະພັນແຮ່ທາດ ທີ່ຈະນຳເຂົ້າ ພ້ອມດ້ວຍຮູບພາບການບັນຈຸ;
   - ກໍລະນີໂຄງການທີ່ດຳເນີນສະເພາະໂຮງງານປຸງແຕ່ງແຮ່ທາດ ຫຼື ດຳເນີນສະເພາະການນຳເຂົ້າຜ່ານດິນແດນ ຂອງ ສປປ ລາວ ແມ່ນສາມາດປະກອບແຜນການນຳເຂົ້າ ແລະ ສົ່ງອອກແຮ່ທາດ ແລະ ຜະລິດຕະພັນແຮ່ທາດເປັນສະບັບດຽວກັນ (ຕາມແບບຟອມ).

II. **ການປະກອບເອກະສານກ່ຽວກັບການສະເໜີຈຳໜ່າຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ແຕ່ລະຄັ້ງ.**

ກ. **ການສະເໜີຈຳໜ່າຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດ.**

1. ໜັງສືສະເໜີ (ຕາມແບບຟອມ);
2. ໃບຢັ້ງຢືນແຜນການຈຳໜ່າຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດປະຈຳປີ;
3. ເອກະສານຢັ້ງຢືນການປະຕິບັດພັນທະທາງດ້ານການເງິນ ຈາກການຈຳໜ່າຍຄັ້ງຜ່ານມາ ເຊັ່ນ: ຄ່າຊັບພະຍາກອນແຮ່ທາດ, ພາສີ-ອາກອນ ແລະ ຄ່າທຳນຽມອື່ນ ທີ່ຜ່ານການຢັ້ງຢືນຈາກຂະແໜງ ການເງິນ;
4. ສັນຍາ ການຊື້-ຂາຍ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ;
5. ຜົນວິໄຈແຮ່ທາດ (ຈາກຫ້ອງວິໄຈ ທີ່ໄດ້ມາດຕະຖານ. ສຳລັບແຮ່ທາດປະເພດໂລຫະ ແລະ ຖ່ານຫີນ ຕ້ອງມີຜົນວິໄຈຂອງພາກລັດກ່ອນການຈຳໜ່າຍ. ໝາຍຄວາມວ່າກ່ອນການຈຳໜ່າຍແຕ່ລະຄັ້ງ ບໍລິສັດຕ້ອງໄດ້ສົ່ງຕົວຢ່າງ ຫຼື ພາກລັດໄປເກັບຕົວຢ່າງຢູ່ພາກສະໜາມມາວິໄຈກ່ອນ, ເມື່ອໄດ້ຮັບຜົນວິໄຈແລ້ວ ຈຶ່ງອະນຸຍາດໃຫ້ຈຳໜ່າຍ);
6. ຮູບພາບ ແຮ່ທາດ ຫຼື ຜະລິດຕະພັນແຮ່ທາດ;
7. ສະຫຼຸບການຈຳໜ່າຍແຮ່ທາດ ແລະ ຜະລິດຕະພັນແຮ່ທາດຜ່ານມາ (ຕາມແບບຟອມ).

ຂ. **ການສະເໜີແຜນການນຳເຂົ້າແຮ່ທາດ ແລະ ຜະລິດຕະພັນແຮ່ທາດ.**

1. ໜັງສືສະເໜີ (ຕາມແບບຟອມ);
2. ໃບຢັ້ງຢືນຮັບຮອງແຜນການນຳເຂົ້າແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ປະຈຳປີ;
3. ເອກະສານຢັ້ງຢືນການປະຕິບັດພັນທະທາງດ້ານການເງິນ ຈາກການນຳເຂົ້າຄັ້ງຜ່ານມາ ເຊັ່ນ: ພາສີ-ອາກອນ ແລະ ຄ່າທຳນຽມອື່ນ;
4. ສັນຍາ ການຊື້-ຂາຍ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ;
5. ຜົນວິໄຈແຮ່ທາດ (ຈາກຫ້ອງວິໄຈ ທີ່ໄດ້ມາດຕະຖານ);
6. ຮູບພາບ ແຮ່ທາດ ຫຼື ຜະລິດຕະພັນແຮ່ທາດ ທີ່ຈະນຳເຂົ້າ ພ້ອມດ້ວຍຮູບພາບການບັນຈຸ;
7. ສະຫຼຸບການນຳເຂົ້າແຮ່ທາດ ແລະ ຜະລິດຕະພັນແຮ່ທາດຜ່ານມາ (ຕາມແບບຟອມ).

III. **ການປະກອບເອກະສານກ່ຽວກັບການສະເໜີນຳເຂົ້າແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ຜ່ານດິນແດນ ຂອງ ສປປ ລາວ.**

1. ໜັງສືສະເໜີ (ຕາມແບບຟອມ);
2. ໃບທະບຽນວິສາຫະກິດ ທີ່ກ່ຽວຂ້ອງກັບການດຳເນີນກິດຈະການກ່ຽວກັບແຮ່ທາດ ຫຼື ບໍລິການນຳເຂົ້າສົ່ງອອກ;
3. ເອກະສານຢັ້ງຢືນການປະຕິບັດພັນທະທາງດ້ານການເງິນ ເຊັ່ນ: ໃບຢັ້ງຢືນການມອບອາກອນ ປະຈຳປີ ແລະ ພາສີ-ອາກອນອື່ນໆທີ່ຕິດພັນ;
4. ໃບຢັ້ງຢືນແຫຼ່ງກຳເນີດແຮ່ທາດ (Certificate of Origin);
5. ໃບ Packing List ແລະ ໃບ Invoice;
6. ສັນຍາ ການຊື້-ຂາຍ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ;
7. ຜົນວິໄຈແຮ່ທາດ;

ກົມຄຸ້ມຄອງບໍ່ແຮ່, ກະຊວງພະລັງງານ ແລະ ບໍ່ແຮ່. ຕູ້ໄປສະນີ: 4780; ໂທລະສັບ: (856 21) 415123, 413001; ແຟັກ: (856 21) 413015;

8. ຮູບພາບ ແຮ່ທາດ ຫຼື ຜະລິດຕະພັນແຮ່ທາດ;

9. ສະຫຼຸບການນຳເຂົ້າ-ສົ່ງອອກແຮ່ທາດ ແລະ ຜະລິດຕະພັນແຮ່ທາດຜ່ານມາ (ຕາມແບບຟອມ).

   - ກໍລະນີ ບໍລິສັດ ມີຈຸດປະສົງນຳເຂົ້າແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ຜ່ານດິນແດນ ຂອງ ສປປ ລາວ ປົກກະຕິ (ໄລຍະຍາວ) ແມ່ນໃຫ້ສະເໜີເປັນແຜນການນຳເຂົ້າແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ປະຈຳປີ ກ່ອນການນຳເຂົ້າ-ສົ່ງອອກຕໍ່ແຕ່ລະຄັ້ງ.

**<u>ໝາຍເຫດ:</u>** ບໍລິສັດຕ້ອງສຳເນົາ ບັນຊີທະນາຄານທຸລະກິດ ຕັ້ງຢູ່ພາຍໃນ ສປປ ລາວ ທີ່ນຳໃຊ້ດຳເນີນວຽກງານການເຄື່ອນໄຫວທາງດ້ານການເງິນຂອງໂຄງການບໍ່ແຮ່ ສົ່ງໃຫ້ກົມຄຸ້ມຄອງບໍ່ແຮ່ ເພື່ອເປັນຂໍ້ມູນອ້າງອີງຕໍ່ການພິຈາລະນາ. ໃນກໍລະນີ ບໍລິສັດ ປະກອບເອກະສານບໍ່ຄົບຖ້ວນຕາມທີ່ກຳນົດໄວ້ ກົມຄຸ້ມຄອງບໍ່ແຮ່ ຈະບໍ່ຮັບເອກະສານ ແລະ ບໍ່ພິຈາລະນາຕໍ່ການສະເໜີດັ່ງກ່າວ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

**ຫົວໜ້າກົມ**

ຈັນທະລາ ແກ້ວທາວົງ

ເອກະສານ ແລະ ແບບຟອມຕ່າງໆ